ບົ້ງເຈາະໝາກເລັ່ນ

ໂດຍ:ບຸນເພັງ ສີຫອມຈັນ,ສູນຄົ້ນຄວ້າພືດຜັກ ແລະ ໄມ້ໃຫ້ໝາກ

ບົ້ງເຈາະໝາກເລັ່ນ ຫຼື ບົ້ງໜັງໜຽວມີ ຊື່ ວິທະຍາສາດວ່າ: *Heliothis armigera*. ຢູ່ໃນອັນດັບຂອງ Lepidoptera ຢູ່ໃນ ຄອບຄົວຂອງ Noctuidae ແລະ ມີຊື່ສາມັນ ວ່າ: TomatoFruit worm ບົ້ງເຈາະໝາກເລັ່ນຢູ່ເປັນຝູງຂະໜາດ ໃຫຍ່ມັກອາໃສຢູ່ນຳຕົ້ນພືດ ແລະ ພືດ ຜັກຫຼາຍຊະນິດ ເຊັ່ນ: ສາລີ, ຝ້າຍ, ຢາສູບ, ເຂົ້າຝ້າງ ແລະ ແນວພັນໄມ້ດອກ ໄມ້ປະດັບບາງຊະນິດ. ເປັນແມງໄມ້ທີ່ມີຄວາມທົນທານຕໍ່ຢາເຄມີ.

ລັກສະນະທົ່ວໄປ ແລະ ວົງຈອນຊີວິດ

ໂຕແກ່ຂອງໂຕບົ້ງເຈາະໝາກເລັ່ນເປັນແມງກະບີ້ຈະມີປີກແຂງສີນ້ຳຕານເປັນຄູ່ຮຽງກັນຍາວປະມານ 30-40 ມມ.ປີກ ມີລາຍສີດຳ ແລະ ສີເທົ່າເປັນເສັ້ນບໍ່ສະເໝີກັນໜ່ວຍຕາເປັນເສັ້ນສີຂາວຈາງ, ເປັນແມງທີ່ມັກຫາກິນໃນເວລາ ກາງຄືນ, ພວກມັນມີຄວາມແຂງແຮງທົນທານສາມາດບິນໄປໄດ້ໄກ . ໂຕແມ່ສາມາດວາງໄຂ່ໄດ້ປະມານ 1,000 ໜ່ວຍ ຫຼືຫຼາຍກວ່ານັ້ນມັນສາມາດເຂົ້າທຳລາຍໝາກເລັ່ນໄດ້ໃນເວລາເປັນດອກ ແລະ ເປັນໝາກ. ພວງຂອງໝາກ ເລັ່ນທີ່ສົມບູນນຶ່ງພວງໂຕແມ່ຂອງບົ້ງສາມາດວາງໄຂ່ໄດ້ເປັນເວລາດົນນານ. ມັນຈະໄຂ່ຢູ່ເທິງຂອງໃບອ່ອນ ແລະ ຢູ່ ໃກ້ກັບໝາກ, ໄຂ່ຈະມີເສັ້ນຜ່າສູນກາງປະມານ 0.5 ມມ, ທຳອິດຈະມີສີຂາວຫາສີເຫຼືອງ ຫຼັງຈາກນັ້ນກໍ່ຈະກາຍ ເປັນສີນ້ຳຕານ ໄຂຈະຟັກເປັນໂຕປະມານ 2-7 ມື້. ການຟັກໄຂ່ນັ້ນແມ່ນຂຶ້ນກັບອຸນຫະພູມ ແລະ ອາຫານ. ເວລາ ໂຕອ່ອນແຕກອອກມາຈະເລີ່ມກິນໃບອ່ອນຂອງຕົ້ນໝາກເລັ່ນ ຫຼັງຈາກນຶ່ງມື້ພວກມັນກໍ່ ສາມາດເຈາະກິນອາຫານຢູ່ ທາງໃນຂອງໝາກເລັ່ນ. ໃນຊ່ວງໄລຍະການຈະເລີນເຕີບໂຕຂອງໂຕອ່ອນພວກມັນມັກກິນໝາກເລັ່ນທີ່ມີສີຂຽວ ແລະ ມັກເຂົ້າໄປຢູ່ທາງໃນຂອງໝາກສະເໝີ. ໂຕແກ່ສ່ວນຫຼວງຫຼາຍຈະມີສີຂຽວຈາງຫາຊົມພູ ຫຼື ສີນ້ຳຕານໝົ່ນ, ລຳໂຕ ຍາວສີໝົ່ນໃຊ້ເວລາໃນການເປັນໂຕບົ້ງປະມານ 14-20 ມື້.ໂຕບົ້ງໃຫຍ່ເຕັມໄວຈະມີຄວາມຍາວ 40 ມມ ແລະ ຈະ ເລີນເຕີບໂຕໄດ້ໄວເມື່ອເວລາທີ່ມີອຸນຫະພູມສູງ. ດັກແດ້ຂອງໂຕບົ້ງເຈາະໝາກເລັ່ນຈະເຈາະຮູຢູ່ໃນດິນມີຄວາມເລິກ ປະມານ5-10 ຊຕມ ດັກແດ້ຈະມີສີໃສອອກສີນ້ຳຕານມີຄວາມ ຍາວປະມານ 16 ມມ. ຈະກາຍເປັນໂຕແກ່ປະມານ 10-14 ມື້.

ລັກສະນະການທຳລາຍ

ໂຕອ່ອນຂອງບົ້ງຈະກິນໃບໝາກເລັ່ນ,ກັດກິນດອກດອກຈະຫົດເຂົ້າໃນທີ່ສຸດດອກກໍ່ ຈະຫຼົ່ນຖ້າຫາກທຳລາຍໃນເວລາ ເປັນໝາກກາຈະຖືກເຈາະທຳລາຍຈົນໝົດພວງ,ໝາກທີ່ຖືກທຳລາຍກໍ່ຈະເປັນຮູເລີກປະມູນສີນ້ຳຕານຢູ່ເທິງຮູ(ໄລຍະທຳ ອິດ)ດົນໄປມູນດັ່ງກ່າວກໍ່ຈະກາຍເປັນສີດຳຖ້າຫາກທຳລາຍໝາກທີ່ຍັງອ່ອນກໍ່ ຈະຍຸດການຈະເລີນເຕີບໂຕໃນທີ່ສຸດກໍ່ ຈະເນົ່າ,ທຳລາຍໝາກສຸກກໍ່ຈະເຮັດໃຫ້ຜົນຜະລິດຂາຍບໍ່ໄດ້ຜົນຜະລິດຫຼຸດລົງ ,90%ທີ່ຖືກບົ້ງເຈາະໝາກເຂົ້າທຳລາຍ ຖ້າຫາກບໍ່ເກັບໝາກທີ່ຖືກທຳລາຍອອກມັນກໍ່ຈະຄ່ອຍເນົ່າ ແລະ ຫຼົ່ນ.

ການປ້ອງກັນແລະກຳຈັດ

ໜັ່ນກວດເບິ່ງພື້ນທີ່ຖ້າຫາກພົບເຫັນໝາກທີ່ມີບົ້ງທຳລາຍໃຫ້ເກັບໝາກທີ່ບົ້ງເຈາະໄປຈູດໄຟຖິ້ມ ຫຼື ນຳໄປຖິ້ມໃຫ້ ຫ່າງໄກຈາກພື້ນທີ່, ຕັດແຕ່ງໃບໝາກເລັ່ນອອກເພື່ອໃຫ້ມັນໄດ້ຮັບແສງແດດພຽງພໍຫຼຸດຜ່ອນການລະບາດຂອງບົ້ງລົງ, ໃຊ້ກັບດັກລໍ້ຈັບ ເຊັ່ນ: ໃຊ້ແສງໄຟລໍ້ຈັບໂຕແກ່ໃນເວລາກາງຄືນໂດຍໃຊ້ໄຟຢອງເທິງອ່າງນຳ້ເພື່ອໃຫ້ໂຕແກ່ມາຕອມ,

ໃຊ້ແຕນບຽນຈຳພວກ Trichogramma spp. ປ່ອຍເຂົ້າພື້ນທີ່ໆ ລະບາດຈະສາມາດຫຼຸດຜ່ອນການທຳລາຍລົງ . ຖ້າ ຫາກຍັງຄວບ ຄຸມບໍ່ໄດ້ໃຫ້ໃຊ້ສານເຄມີ ເຊັ່ນ: ແລນເນດໃນອັດຕາ 20-30 ກຼາມ/ ນ້ຳ 20 ລິດ.